# ແຜນການສອນ
# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 28 ກັນຍາ 2008 (09-28-2008)

---

## <u>ຈະໃຊ້ມັນ ຫລືຈະເສັຽມັນ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ມັດທາຍ 25:14-30)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ພຣະເຢຊູບອກເປັນຄຳອຸປມາເຣື່ອງຂ້າໃຊ້ທີ່ຖືກມອບໝາຍໃຫ້ຮັກສາຊັບຂອງຜູ້ເປັນນາຍ ຂນະທີ່ນາຍເດີນທາງໄປທາງໄກ. ຈາກຄຳອຸປມານັ້ນພຣະເຢຊູເນັ້ນໜັກໃສ່ຜູ້ທີ່ຕິດຕາມພຣະອົງ ຕ້ອງມີຄວາມສັດຊື່ໃນການຄຸ້ມຄອງສິ່ງຂອງທັງໝົດທີ່ພຣະເຈົ້າຊົງມອບໝາຍໃຫ້ແກ່ພວກເຂົາເຈົ້າ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ພວກທີ່ເຖົ້າກະສຽນຫລາຍຄົນໃນສມັຍນີ້ມີຄວາມດຶງດູດພາຍໃນຕົວ, ເຊັ່ນດຽວກັນເຂົາເຈົ້າບໍ່ມີພລັງ ຫລືບໍ່ມີຄວາມສົນໃຈທີ່ຈະມີສ່ວນຮ່ວມໃນການຊ່ອຍເຫລືອຄົນອື່ນ, ພວກເຂົາບໍ່ມີເວລາເພາະວ່າພວກເຂົາຫຍຸ້ງນຳກິດທຸຣະສ່ວນຕົວ, ພວກເຂົາບໍ່ມີເງິນເຫລືອຫລັງຈາກເຂົາພຍາຍາມຫາຄວາມພໍໃຈຕໍ່ຄວາມກະຫາຍຂອງພວກເຂົາເອງ, ພວກເຂົາມອງບໍ່ເຫັນສິ່ງຂອງທັງໝົດທີ່ເຂົາມີເວລາຢູ່ ພອນສວັນຕ່າງ ໆ, ຊັບສົມບັດສາຍສັມພັນ, ໂອກາດ- ທີ່ພຣະເຈົ້າໄດ້ຊົງປະທານໃຫ້ເພື່ອໃຊ້ໃນການຂຍາຍຣາຊອານາຈັກຂອງພຣະອົງ.

**<u>ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ?:</u>** ທ່ານຈະໄດ້ຖືກທ້າທາຍໃຫ້ສ່ຽງຕໍ່ການລົງທຶນກັບຂອງທັງໝົດທີ່ພຣະເຈົ້າມອບໝາຍໃຫ້ທ່ານຄຸ້ມຄອງເພື່ອໃຫ້ເປັນປໂຍດຕໍ່ຣາຊອານາຈັກຂອງພຣະອົງ.

### <u>ການຈັດຕຽມຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີ ແລະບົດຮຽນ.
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ.
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ.
4. ອ່ານ **<u>"ແຜນການສອນ",</u>** ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບ ຫລືຕົວຢ່າງກໍຈົດບັນທຶກໄວ້.

### <u>ແຜນການສອນ:</u>

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຫລວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດ ເພື່ອຈະໄດ້ສົ່ງຂ່າວຫາ ແລະອະທິຖານເພື່ອ.
3. ຖາມນັກຮຽນວ່າ ເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນອາທິດທີ່ຜ່ານມາ ເພື່ອທົບທວນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ. ຄຳພຍານ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນ ແລະຜູ້ຂາດຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

**<u>ແນະນຳ</u>**: ທົບທວນລົ້ມຄືນເຣື່ອງຄຳອຸປມາຕັ້ງແຕ່ເຣື່ອງທີນຶ່ງຮອດບົດຮຽນໃນມື້ນີ້ ໂດຍການໃຊ້ປະຫວັດ (ເຣື່ອງສັ້ນ)

- ຄຳຖາມ: ໃນຖານະທີ່ທ່ານເຄີຍລ້ຽງລູກ ທ່ານມີຄວາມຮັບຜິດຊອບເຂົາດີປານໃດ, ພິເສດໃນການສົນໃຈເຣື່ອງເງິນເດເຂົາມີຄວາມຮັບຜິດຊອບຄອບຄອງມັນແນວໃດ? ບໍ່ແມ່ນເຂົາສົນໃຈສັດລ້ຽງຫລາຍກວ່າບໍ?

ຄວາມຈິງແລ້ວເຮົາຈະເຫັນວ່າເຂົາໄດ້ມີຄວາມສົນໃຈແຕ່ເລື່ອງທາງຝ່າຍຮ່າງກາຍເທົ່າເພື່ອເຂົາຈະໄດ້ຈະເຣີນເຕີບໂຕຂອງເຂົາເທົ່ານັ້ນເຂົາບໍ່ໄດ້ສົນໃຈທາງຝ່າຍຈິດວິນຍານເລີຍ.

- ນຳພານັກຮຽນໃຫ້ເວົ້າເຖິງແຜນການຂອງເຂົາແຕ່ລະມື້ວ່າ ເຂົາເຈົ້າມີຄວາມຮັບຜິດຊອບຫຍັງແດ່ໃນແຜນການນັ້ນ. ພວກເຮົາທຸກຄົນມີຄວາມເຊື່ອໄວ້ວາງໃຈໃນການທີ່ພຣະເຈົ້າໄດ້ຊົງປະທານໃຫ້ທຸກມື້ໃນຊີວິດການດຳຣົງຊີວິດປະຈຳວັນຂອງພວກເຮົາ.

1. **<u>ສິ່ງທີ່ຖືກມອບໝາຍໃຫ້:</u>** (ມັດທາຍ 25:14-18)

- ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ມັດທາຍ 25:14-18
- ຊີ້ໃຫ້ເຫັນເຖິງ ຂ້າໃຊ້ທີ່ໄດ້ຮັບເງິນຕາລັນຈາກເຈົ້ານາຍເພື່ອໃຫ້ເຂົາຮັບຜິດຊອບ: ແບ່ງປັນເຈັ້ຍໃຫ້ຜູ້ລະຫ້າແຜ່ນນ້ອຍ ໆ. ໃຫ້ເຂົາພິຈາຣະນາເບິ່ງວ່າ ພຣະເຈົ້າໄດ້ໃຫ້ "ພອນສວັນ" ໃນແຕ່ລະຢ່າງໃນຫ້າຕຳແໜ່ງໃນຊີວິດຂອງເຂົາແນວໃດແດ່? ແລະຂຽນລົງໃນເຈັ້ຍແຕ່ລະແຜ່ນຂອງໃຜລາວ, ເຊັ່ນຕົວຢ່າງ: ເປັນຜູ້ຮັບໂທຣະຊັບ, ເປັນຜູ້ຕ້ອນຮັບແຂກ. ເປັນຜູ້ທຳງານໃນຫ້ອງການທ່ານໝໍ..... ແລ້ວໃຫ້ບາງຄົນໄດ້ມີໂອກາດແບ່ງປັນສິ່ງທີ່ຕົນໄດ້ຂຽນລົງໃນເຈັ້ຍນັ້ນ ຕາມເວລາທີ່ເໝາະສົມ. ພຣະເຈົ້າບໍ່ໄດ້ໃຫ້ພວກເຮົາເປັນນັກດົນຕຣີໝົດທຸກຄົນ, ບໍ່ໃຫ້ພອນສວັນຢ່າງດຽວກັນໝົດທຸກຄົນ.
- ໃຫ້ຜູ້ນຶ່ງສລຸບຕາມພຣະທັມ 1 ໂກຣິນໂທ 12:12-30, ຜູ້ນຶ່ງສລຸບຕາມພຣະທັມ ເອເຟໂຊ 4:11-16.
- ຈຸດປະສົງທີ່ພຣະເຈົ້າໃຫ້ເງິນແກ່ຂ້າທາດຮັບໃຊ້ສອງຄົນນັ້ນພຣະເຈົ້າຢາກຮູ້ວ່າເຂົາຈະຮັບຜິດຊອບຕໍ່ໜ້າທີ່ຂອງເຂົາທີ່ພຣະອົງຊົງມອບໝາຍໃຫ້ນັ້ນແນວໃດ.ພວກເຮົາກໍເຊັ່ນດຽວກັນພຣະເຈົ້າເອີ້ນເຮົາແຕ່ລະຄົນໃຫ້ເຮັດເຊັ່ນດຽວກັນກັບສອງຄົນນັ້ນ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** (ມັດທາຍ25:14-18)

1. ຄຳວ່າທັນທີທັນໃດນັ້ນມີຄວາມແຕກຕ່າງກັບ (ຂໍ້ທີ 15)ແນວໃດ?
2. ສົມຄວນບໍ່ທີ່ຂ້າໃຊ້ສອງຄົນທຳອິດນັ້ນຈະໄດ້ຮັບເງິນຫລາຍ ຖ້າເຂົາບໍ່ຮີບເອົາໄປລົງທຶນກ່ອນເຂົາຈະໃຊ້ມັນ?
3. ທ່ານໄດ້ຮຽນຈາກບົດຮຽນນີ້ໃນແງ່ໃດ?
4. ໃນທາງໃດທີ່ທ່ານມີຄວາມສົງສັຍເລື່ອງຣາຊອານາຈັກແຜ່ນດິນຂອງພຣະເຈົ້າ ແມ່ນຫຍັງທີ່ພຣະອົງໄດ້ມອບໝາຍໃຫ້ທ່ານ?
5. ທ່ານໄດ້ມີຄວາມຮູ້ສຶກວ່າພຣະອົງມອບໃຫ້ທ່ານຫລາຍເກີນໄປ ຫລືໜ້ອຍເກີນໄປບໍ່?
6. ທ່ານມີຄວາມເຊື່ອຕໍ່ການຢັ່ງຮູ້ຂອງພຣະອົງບໍ່?
7. ການຄອບຄອງຂອງພຣະເຈົ້າເໜືອພວກເຮົາແນວໃດແດ່? (ອ່ານພຣະທັມປະຖົມມະການບົດທີ 1:26-30) ຊຶ່ງຕົວຢ່າງການຮັບໃຊ້ນີ້ເປັນແບບຢ່າງແກ່ພວກເຮົາແນວໃດ, ພວກເຮົາຄວນຮັບຜິດຊອບຕໍ່ທຸກສິ່ງທີ່ພຣະອົງມອບໝາຍໃຫ້ພວກເຮົາແນວໃດ?

2. **<u>ລາງວັນຂອງຄວາມສັດຊື່:</u>** (ມັດທາຍ 25:19-23)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມັດທາຍ 25:19-23
- ລາງວັນຂອງການຮັບຜິດຊອບຂອງເຂົາເຈົ້າແມ່ນມາຈາກຄວາມພໍໃຈ ແລະຄວາມຍິນດີຂອງເຈົ້ານາຍ; ຊຶ່ງບໍ່ແມ່ນເຂົາເຈົ້າເຮັດເພື່ອເງິນ ຫລືເພື່ອຕົນເອງ, ແມ່ນເຈົ້ານາຍຕ່າງຫາກທີ່ໄດ້ມອບໃຫ້ແກ່ເຂົາ.
- ທ່ານອາຈໄດ້ຮັບການຊົງອວຍພອນຫລາຍກວ່າຄົນອື່ນກໍເປັນໄດ້ ທັງທ່ານແລະຄົນອື່ນ ໆ ພຣະເຈົ້າກໍຊົງຍັງຕ້ອງການໃຫ້ສຳລັບການເອົາໄປລົງທຶນເໝືອນກັນ.
- ໃຫ້ນັກຮຽນແບ່ງປັນຍົກຕົວຢ່າງການອວຍພອນ ວ່າຄົນອື່ນໄດ້ຮັບການອວຍພອນຢ່າງໃດ ໂດຍການໃຊ້ສິ່ງທີ່ພຣະອົງຊົງມອບໝາຍໃຫ້.
- ໃຫ້ຄຳສລຸບຕາມຄວາມເຊື່ອທີ່ພວກເຮົາໄດ້ຮັບ, ພວກເຮົາອາດຈະໄດ້ຮັບຫລາຍກວ່າຄວາມຄາດໝາຍ.
- ໃຫ້ແບ່ງປັນສິ່ງທີ່ທ່ານໄດ້ປະຕິບັດຕາມດ້ວຍຄວາມເຊື່ອ ແລະໄດ້ມາເກີນກວ່າທ່ານໄດ້ຕັ້ງເປົ້າໝາຍໄວ້.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** ມັດທາຍ 25:19-23

1. ພວກເຮົາສາມາດບອກໄດ້ບໍ່ວ່າຂ້າໃຊ້ໄດ້ຮູ້ຈັກບໍ່ວ່າເຈົ້າຂອງເຂົາໄດ້ໄປດົນປານໃດ?
2. ຜົນກັບມາທີ່ເຂົາຈະໄດ້ຮັບຈາກນາຍຂອງເຂົາຫລາຍປານໃດ ແລະຢ່າງໃດ?
3. ເຣື່ອງນີ້ໄດ້ມີການກ່ຽວພັນກັບຄຳອຸປມາເຣື່ອງສາວພົມມະຈາຣີ 10 ຄົນທີ່ໄດ້ຮຽນໃນອາທິດຜ່ານມາແນວໃດ?
4. ຖ້າຫາກທ່ານຮູ້ຈັກວ່າພຣະເຢຊູຈະກັບມາໃນມື້ອື່ນນີ້, ພຣະອົງຈະປະເມີນຄ່າການເກີດຜົນຂອງທ່ານດ້ວຍໂອກາດທີ່ພຣະອົງຊົງໃຫ້ແກ່ທ່ານນັ້ນແນວໃດ?
5. ບົດບາດໃນການສຶກສາພຣະທັມ ແລະ ການອະທິຖານໄດ້ສະແດງອອກໃຫ້ເຫັນຄວາມສັດຊື່ຕໍ່ການລົງທຶນດ້ວຍເງິນຕາລັນທີ່ພຣະເຈົ້າມອບໝາຍໃຫ້ຢ່າງໃດ?

3. **<u>ສວຍໃຊ້ໂອກາດຢ່າງບໍ່ເສັຽດາຍ:</u>** (ມັດທາຍ 25:24-30)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມັດທາຍ 25:24-30
- ເປັນເພາະເຫດໃດຂ້າໃຊ້ຜູ້ທີ 3 ຈຶ່ງຈຶ່ງຖືກເຈົ້ານາຍແຍກອອກ.(ເພາະລາວບໍ່ສລາດພໍທີ່ຈະເອົາເງິນໄປລົງທຶນໄດ້ບໍ, ແຕ່ເພາະວ່າລາວບໍ່ຮູ້ເວລາຂອງເຈົ້ານາຍກັບມາແລ້ວຄິດສະເລັ່ຽກັບລາວແນວໃດ ແລະລາວບໍ່ໄດ້ທຳຕາມປະສົງຂອງນາຍ.) ຊຶ່ງມີຫລາຍຄົນຮູ້ຈັກພຣະເຢຊູ, ແຕ່ບໍ່ໄດ້ເຂົ້າມາຫາພຣະອົງ.
- ພວກເຮົາຖືກຮຽກຮ້ອງອອກມາໃນຄວາມເຊື່ອໃຫ້ຈະເຣີນຂຶ້ນໃນການການຢູ່ໃກ້ຊິດພຣະເຈົ້າ ແລະຊ່ອຍເຫລືອຊຶ່ງກັນ ແລະກັນ "ປ້ອງກັນບໍ່ໃຫ້ມີຄວາມຢ້ານວ່າຂອງຂວັນນັ້ນຈະເສັຽໄປ" ເຂົາຈະບໍ່ເຮັດໃຫ້ພຣະເຈົ້າເສັຽພຣະທັຍ.
- ພວກເຮົາອາດຈະມີປະສົບການແຕ່ຢ່າງດຽວ, ຖ້າພວກເຮົາບໍ່ຝຶກຝົນ, ບໍ່ບຸກບືນ, ບໍ່ດຳເນີນຕໍ່ໄປ ແລະບໍ່ປັບປຸງໃນສິ່ງທີ່ພຣະເຈົ້າຊົງປະທານໃຫ້.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** ມັດທາຍ 25:24-30

1. ຄຳເວົ້າຂອງຂ້າໃຊ້ຜູ້ທີ 3 ໄດ້ອອກມານັ້ນໄດ້ສະແດງເຖິງການຂາດຄວາມສັມພັນກັບເຈົ້ານາຍຂອງລາວແນວໃດ?
2. ທ່ານໄດ້ເຄີຍຮູ້ຈັກບາງຄົນທີ່ໄດ້ຮັບພຣະພອນຈາກພຣະເຈົ້າ, ແຕ່ບໍ່ໄດ້ນຳພຣະພອນນັ້ນໄປໃຊ້ເພື່ອຖວາຍກຽດພຣະອົງບໍ່? ຜົນສະທ້ອນອອກມາເປັນແນວໃດ?
3. ບົດຮຽນທີ່ທ່ານໄດ້ຮຽນໃນວັນນີ້ໄດ້ສະທ້ອນຕໍ່ການຊ່ອຍໃຫ້ສະມາຊິກເຫັນຄວາມສຳຄັນຂອງຄວາມເຊື່ອຢ່າງສັດຊື່ທະວີຂຶ້ນໃນສິ່ງທີ່ພຣະເຈົ້າຊົງປະທານໃຫ້ບໍ່?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ພຣະເຈົ້າໄດ້ໃຫ້ຄວາມສາມາດແກ່ທຸກ ໆ ຄົນ, ຕລອດທັງຜູ້ທີ່ບໍ່ເຊື່ອດ້ວຍ, ໃຫ້ເພີ້ມຂື້ນໃນໃນຣາຊອານາຈັກຂອງພຣະອົງ ແລະນຳພຣະກຽດມາສູ່ພຣະອົງ.
- ພຣະເຈົ້າຢາກໃຫ້ໄພ່ພົນຂອງພຣະອົງລົງທຶນທີ່ໄດ້ມາຈາກພຣະອົງຜ່ານທາງເວລາທີ່ເຂົາມີ, ແລະທຳດ້ວຍຄວາມເຕັມໃຈຂອງເຂົາ.
- ລາງວັນທີ່ພຣະເຈົ້າໃຫ້ຜູ້ຮັບໃຊ້ທີ່ມີຄວາມສັດຊື່ຕໍ່ພຣະປະສົງຂອງພຣະອົງ, ຢ່າງບໍ່ຄຳນຶງເຖິງຄວາມສາມາດ ແລະໂອກາດຂອງເຂົາ.
- ສຸທ້າຍພຣະເຈົ້າຈະຕັດສິນຜູ້ທີ່ບໍ່ຍອມໃຊ້ຂອງປະທານທີ່ມາຈາກຣາຊອານາຈັກຂອງພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ [www.lsbf.org](http://www.lsbf.org). by JH**